# ກອງປະຊຸມສຸດຍອດຄະນະກຳມະການແມ່ນ້ຳຂອງສາກົນຈະຈັດຂຶ້ນໃນເດືອນເມສານີ້

ຄະນະກຳມະການແມ່ນ້ຳຂອງສາກົນ ໃຫ້ຮູ້ວ່າ: ກອງປະຊຸມສຸດຍອດຄະນະກຳມະການແມ່ນ້ຳຂອງສາກົນຄັ້ງທີ 3 ຈະຈັດຂຶ້ນໃນຕົ້ນເດືອນເມສານີ້, ທີ່ສຽມລຽບປະເທດກຳປູເຈຍ, ແນໃສ່ສົ່ງເສີມການຮ່ວມມື ແລະ ສ້າງຄວາມເຂົ້າໃຈຮ່ວມກັນພາຍໃຕ້ຄຳຂວັນ: "ທີ່ອນ້ຳຂອງ ທີ່ອຈິດໃຈ" ໂດຍຈະໄດ້ » *ອ່ານຕໍ່ໜ້າ 9*

**ກອງປະຊຸມສຸດຍອດຄະນະກຳມະການ...**

( ຕໍ່ຈາກໜ້າ 1 )

ຮັບກຽດເຂົ້າຮ່ວມຂອງບັນດາທ່ານນາຍົກລັດຖະມົນຕີຂອງປະເທດສະມາຊິກ ເຊັ່ນ: ກຳປູເຈຍ, ລາວ, ໄທ ແລະ ຫວຽດນາມ ແລະ ຜູ້ຕາງໜ້າລະດັບສູງຈາກຄູ່ຮ່ວມເຈລະຈາມີ ສປ ຈີນ ແລະ ມຽນມາ ເພື່ອແກ້ໄຂບັນຫາສິ່ງທ້າທາຍ ແລະ ພັດທະນາຊີວິດການເປັນຢູ່ຂອງປະຊາຊົນໃນເຂດດັ່ງກ່າວດີຂຶ້ນ.

ທ່ານ ຟາມ ດວນ ຟານ ຜູ້ບໍລິຫານໃຫຍ່ກອງເລຂາ (ຄມສ) ກ່າວວ່າ: ຄຳຂວັນນີ້ສື່ໄດ້ຢ່າງຊັດເຈນເຖິງຈິດໃຈຫລັກຂອງກອງປະຊຸມສຸດຍອດຄັ້ງທີ 3 ນີ້ ແລະ ກອງປະຊຸມຈະຈັດໃຫ້ມີຫລາຍລະດັບໃນເວທີສາກົນໃນລະຫວ່າງວັນທີ 2-3 ເມສາ 2018 ເພື່ອໃຫ້ໂອກາດ (ຄມສ) ແລະ ຜູ້ມີສ່ວນຮ່ວມຈາກອົງການທີ່ບໍ່ສັງກັດລັດຖະບານ, ສະຖາບັນການສຶກສາພາກເອກະຊົນ ແລະ ອົງການຈັດຕັ້ງອ່າງແມ່ນ້ຳຂອງຕ່າງໆໃນຂົງເຂດ ແລະ ທົ່ວໂລກສາມາດແລກປ່ຽນຄຳເຫັນໃນແນວຄວາມຄິດທີ່ທັນສະໄໝແລະສ້າງສັນ.

ຂ່າວໃຫ້ຮູ້ອີກວ່າ: ເມື່ອບໍ່ດົນມານີ້, ຢູ່ນະຄອນຫລວງວຽງຈັນ, ຄະນະກຳມະການແມ່ນ້ຳຂອງສາກົນ (ຄມສ) ໄດ້ມີພິທີເປີດນຳໃຊ້ເວບໄຊ www.mrcsummit.org ຢ່າງເປັນທາງການສຳລັບກອງປະຊຸມສຸດຍອດຄັ້ງທີ 3 ແລະ ກອງປະຊຸມສາກົນອື່ນໆ, ຊຶ່ງສາມາດຫາຂໍ້ມູນຕາມເວບໄຊດັ່ງກ່າວ, ພ້ອມໄດ້ເຊີນຊວນການປະກອບສ່ວນ ແລະ ການມີສ່ວນຮ່ວມຂອງພາກສ່ວນຕ່າງໆ.